ສຽງຂອງສະພາແຫ່ງຊາດ

ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ພະຈິກ 2026 ປີທີ 15 ສະບັບທີ 1089

ສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ສພຊ ຊຸດທີ X



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໃນຕອນບ່າຍຂອງວັນທີ 21 ຕຸລານີ້ ໂດຍການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງ

ອ່ານຕໍ່ໜ້າ 3



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ເຊີດຊູລະດັບຄວາມຮັບຮູ້, ລະດັບທັດສະນະ, ຄວາມຮູ້ດ້ານວິທະຍາສາດເຕັກນິກ ແລະ ວິຊາການຂອງພະນັກງານຊັ້ນສູງ, ຊັ້ນກາງ ໃນຂະແໜງການ ແລະ ທ້ອງຖິ່ນຕ່າງໆ.

(ນິພົນເລືອກເຟັ້ນ ເຫຼັ້ມ 2, ໜ້າ 45)

ອ່ານຕໍ່ສະບັບໜ້າ

ກົດໝາຍການປົກປ້ອງເງິນຝາກ ຈະສ້າງຄວາມເຊື່ອໝັ້ນໃຫ້ຜູ້ຝາກເງິນ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 2ຂອງສະພາແຫ່ງຊາດຊຸດທີ X ຄັ້ງວັນທີ 19 ຕຸລາ 2026, ທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການທະນາຄານແຫ່ງ ສປປລາວ (ທຫລ) ໄດ້ສະເໜີສ້າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ໂດຍຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກໃນໄລຍະຜ່ານມາ, ເຫດຜົນ ແລະ ຄວາມຈຳເປັນ, ການຄົ້ນຄວ້າສ້າງ

ອ່ານຕໍ່ໜ້າ 8

ສະເໜີລັດຖະບານເອົາໃຈໃສ່ 15 ມາດຕະການ



(ສພຊ) - ວັນທີ 20 ຕຸລາ 2026, ທ່ານ ວິໄລ ວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ (ສພຊ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບການພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງ

ອ່ານຕໍ່ໜ້າ 8

ກອງປະຊຸມ ສພຊ ຮັບຮອງ 17 ມະຕິ



(ສພຊ) - ຕອນບ່າຍ ວັນທີ 21 ຕຸລານີ້, ທ່ານ ບຸນຈັນ ສີວົງພັນ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຫົວໜ້າກອງເລຂານຸການກອງປະຊຸມ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2

ອ່ານຕໍ່ໜ້າ 6

ຜົນການຮັບຮອງກົດໝາຍ 8 ສະບັບ



(ສພຊ) ຊຸດທີ X ໄດ້ສຸມໃສ່ພິຈາລະນາບັນດາຮ່າງກົດໝາຍ ຈຳນວນ 8 ສະບັບ, ໃນນັ້ນ ສ້າງໃໝ່ 1 ສະບັບ ແລະ ປັບປຸງ 7 ສະບັບ ດັ່ງນີ້:

- ກົດໝາຍສ້າງໃໝ່ 1 ສະບັບ:

ກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການສ້າງ ໂດຍທ່ານຜູ້ວ່າການທະນາຄານແຫ່ງ ສປປລາວ; ມີຜູ້ແທນເຂົ້າຮ່ວມ 163 ທ່ານ, ໄດ້

ອ່ານຕໍ່ໜ້າ 6

(ສພຊ) - ວັນທີ 21 ຕຸລາ 2026, ທ່ານ ກອງ ແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບການພິຈາລະນາຮັບຮອງເອົາບັນດາກົດໝາຍ ເຊິ່ງທ່ານໃຫ້ຊາບວ່າ: ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ

ປັບປຸງກົດໝາຍລັດຖະບານ ໃຫ້ສອດຄ່ອງກັບມະຕິພັກ



(ສພຊ) - ທ່ານ ບົວຄົງ ນາມມະວົງ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍລັດຖະບານ ຕໍ່ກອງປະຊຸມສະໄໝສາມັນເທື່ອ 2 ຂອງສະພາແຫ່ງຊາດ ຊຸດທີ X ໃນວັນທີ 16 ຕຸລານີ້ ເຊິ່ງທ່ານກ່າວວ່າ: ອີງຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 5 ປີ (2026-2030) ຕາມທິດສ້າງບາດກ້າວບຸກທະລຸ; ທັນກັນໄກການຄຸ້ມຄອງບໍລິຫານລັດ ໃຫ້ມີຄວາມວ່ອງໄວ, ທັນສະໄໝ, ເປັນລະບົບຄົບຊຸດ, ຖືກຕ້ອງ ຄົບຖ້ວນ ແລະ ທັນກັບສະພາບການ; ການປັບປຸງກົງຈັກການຈັດຕັ້ງ ທີ່ໄດ້ໂຮມບັນດາກະຊວງ, ອົງການເຂົ້າກັນ ເຮັດໃຫ້ໂຄງປະກອບຂອງສະມາຊິກລັດຖະບານຫຼຸດລົງ. ພ້ອມດຽວ

ອ່ານຕໍ່ໜ້າ 3

ສູມທອນພິດປິດກອງປະຊຸມສະໄໝສາມັນເທື່ອທີ 2 ສະພາແຫ່ງຊາດ ຊຸດທີ X

(ສພຊ) - ໃນພິທີປິດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X, ທ່ານ ສອນໄຊ ສີພັນດອນ ປະທານສະພາແຫ່ງຊາດ ໄດ້ກ່າວສູມທອນພິດປິດກອງປະຊຸມວ່າ: ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ໄດ້ດຳເນີນມາແຕ່ວັນທີ 5 ຫາ 21 ຕຸລາ 2026, ມາຮອດມື້ນີ້ ໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້; ກອງປະຊຸມຕີລາຄາສູງທີ່ສະມາຊິກສະພາແຫ່ງຊາດ, ສະມາຊິກລັດຖະບານ, ຜູ້ແທນກອງປະຊຸມຈາກພາກສ່ວນທີ່ກ່ຽວຂ້ອງ ໄດ້ພ້ອມກັນທຸ່ມເທເຫື່ອແຮງ, ສະຕິປັນຍາ ແລະ ເສີມຂະຫຍາຍສິດປະຊາທິປະໄຕ ເຂົ້າໃສ່ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດຂອງສະພາແຫ່ງຊາດ ທີ່ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ເຊິ່ງເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເຂົ້າສູ່ວຽກງານຕົວຈິງຂອງອົງການຈັດຕັ້ງລັດ ດ້ວຍການອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 17 ສະບັບ ເພື່ອເປັນບ່ອນອີງໃຫ້ແກ່ລັດຖະບານ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ນຳໄປຈັດຕັ້ງປະຕິບັດ ແນໃສ່ເຮັດໃຫ້ປະເທດຊາດ ມີການພັດທະນາຢ່າງຕໍ່ເນື່ອງ, ສືບຕໍ່ມີສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດສືບຕໍ່ຂະຫຍາຍຕົວ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ.

ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ໄດ້ພິຈາລະນາ, ຮັບຮອງເອົາເນື້ອໃນສຳຄັນຈຳນວນໜຶ່ງ ດັ່ງນີ້:

1) ກອງປະຊຸມໄດ້ພິຈາລະນາ ແລະ ເລືອກຕັ້ງປະທານສະພາແຫ່ງຊາດ ຊຸດທີ X ແລະ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປລາວ ຕາມລັດຖະທຳມະນູນ ແລະ ກົດໝາຍ ເຊິ່ງເປັນການເລືອກຕັ້ງບຸກຄະລາກອນໃນຕຳແໜ່ງສຳຄັນຂອງລັດ ເພື່ອສືບຕໍ່ນຳພາ-ຊີ້ນຳການບູລະນະລະບົບອຳນາດລັດ ປະຊາທິປະໄຕ ປະຊາຊົນ ໃຫ້ໄປຕາມທິດການພັດທະນາປະເທດເຮົາ ໃຫ້ມີຄວາມໜັກແໜ້ນຕາມທິດ ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງ, ເຂັ້ມແຂງ, ສັງຄົມມີປະຊາທິປະໄຕ, ສາມັກຄີເປັນປຶກແຜ່ນ, ຍຸຕິທຳ ແລະ ສີວິໄລ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.

2) ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2026 ແລະ ທິດທາງແຜນການປະຈຳປີ 2027; ກອງປະຊຸມຕີລາຄາສູງຕໍ່ຄວາມພະຍາຍາມຂອງລັດຖະບານ ໃນການນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ເຊິ່ງໄດ້ຮັບຜົນສຳເລັດຫຼາຍດ້ານ, ເຮັດໃຫ້ທົ່ວປະເທດສືບຕໍ່ມີສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ ໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວສະເລ່ຍໝົດປີໃນລະດັບ 5.1% (ມະຕິສະພາແຫ່ງຊາດ 5.5%), ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ, ບົດບາດອິດທິພົນຂອງປະເທດເຮົາໃນພາກພື້ນ ແລະ ສາກົນ ໄດ້ຮັບການຍົກສູງຂຶ້ນ.

ກອງປະຊຸມສະເໜີໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳການເກັບລາຍຮັບໂດຍນຳໃຊ້ລະບົບທັນສະໄໝໃຫ້ໄດ້ຢ່າງຄົບຖ້ວນ ໂດຍສະເພາະເກັບລາຍຮັບຈາກທີ່ດິນ, ຄ່າເຊົ່າ, ສຳປະທານຊັບສິນ ແລະ ຄ່າຊົດເຊີຍ ເພື່ອປະກອບທຶນພັດທະນາປະເທດ; ແກ້ໄຂບັນຫາການຍົກເວັ້ນການປະຕິບັດກົດໝາຍ ທີ່ສົ່ງຜົນກະທົບຕໍ່ການເກັບລາຍຮັບເຂົ້າງົບປະມານ, ແກ້ໄຂໜີ້ສິນສາທາລະນະ, ໜີ້ສິນໂຄງການລົງທຶນຂອງລັດ ໃຫ້ມີຄວາມຄືບໜ້າ; ກວດກາຄືນບັນດາສັນຍາສຳປະທານຊຸດຄົ້ນແຮ່ທາດ ໃຫ້ມີຄວາມຮັດກຸມ, ຮັບປະກັນການຈັດເກັບຜົນທະຕ່າງໆ ໃຫ້ມີຄວາມໂປ່ງໃສ ແລະ ຄົບຖ້ວນ; ເພີ່ມທະວີມາດຕະການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ, ປ່າໄມ້ ແລະ ສັງຄົມ ຢ່າງເຂັ້ມງວດ ແລະ ມີມາດຕະການຢ່າງເດັດຂາດຕໍ່ບັນດາໂຄງການທີ່ຖືກປະເມີນ ແລະ ຈັດຢູ່ໃນປະເພດ C ແລະ C+ ຕິດພັນກັບປະເມີນຄືນການຈັດຕັ້ງປະຕິບັດຍຸດທະສາດແຮ່ທາດ ຮອດປີ 2030; ສືບຕໍ່ຄວບຄຸມ ແລະ ແກ້ໄຂບັນຫາເງິນເຟີ້, ອັດຕາແລກປ່ຽນ, ການເໜັງຕີງຂອງລາຄາສິນຄ້າ ດ້ວຍການນຳໃຊ້ມາດຕະການທາງກົດໝາຍ ແລະ ມາດຕະການທາງເສດຖະກິດ ຢ່າງເຂັ້ມງວດ ແລະ ເດັດຂາດ; ຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຫຼຸດຜ່ອນການນຳເຂົ້າ ແລະ ສົ່ງເສີມການຜະລິດເປັນສິນຄ້າສົ່ງອອກໃຫ້ຫຼາຍຂຶ້ນ ໂດຍຕິດພັນກັບຕ່ອງໂສ້ການຜະລິດ ຮັບປະກັນການເຂົ້າເຖິງຕະຫຼາດ; ເອົາໃຈໃສ່ຄຸ້ມຄອງລຶດບັນທຸກນ້ຳໜັກເກີນ ແລະ ບໍ່ຖືກຕາມມາດຕະຖານເຕັກນິກ (ຍານພາຫະນະດັດແປງເອງ), ມີມາດຕະການທີ່ເຂັ້ມງວດຕໍ່ຜູ້ລະເມີດ, ການສ້າງຟື້ນຟູ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງທ້ອງຖິ່ນ, ເສັ້ນທາງຊາຍແດນ, ເສັ້ນທາງໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ໃຫ້ໄດ້ຮັບການປັບປຸງດີຂຶ້ນ.



ກອງປະຊຸມສະເໜີໃຫ້ລັດຖະບານ ເພີ່ມການລົງທຶນຂອງລັດເຂົ້າໃສ່ການພັດທະນາຂົງເຂດສຶກສາ ແລະ ກິລາ, ສາທາລະນະສຸກ ໃຫ້ບັນລຸຕາມຄາດໝາຍທີ່ກຳນົດໃນກົດໝາຍ, ພັດທະນາຫຼັກສູດການຮຽນ-ການສອນ ໃຫ້ມີຄຸນນະພາບຂຶ້ນຕື່ມ; ສົ່ງເສີມການພັດທະນາສີມືແຮງງານ ໃຫ້ມີຄຸນນະພາບສູງຂຶ້ນ; ສະເໜີໃຫ້ຄົ້ນຄວ້າມີແຜນຮັບມືແຕ່ຫົວທີ, ມີນິຕິກຳຄຸ້ມຄອງ ແລະ ວິທີການແກ້ໄຂການຮັບມືກັບໄພພິບັດທຳມະຊາດ ແລະ ຟື້ນຟູເນື້ອທີ່ການຜະລິດຂອງປະຊາຊົນ ທີ່ຖືກຜົນກະທົບຈາກໄພພິບັດ ກັບເຂົ້າສູ່ສະພາບປົກກະຕິ; ປະຕິບັດນະໂຍບາຍຕໍ່ບຸກຄົນ ແລະ ຄອບຄົວທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ; ເອົາໃຈໃສ່ຄຸ້ມຄອງແຫຼ່ງທ່ອງທ່ຽວທີ່ເປັນມໍລະດົກໂລກ, ມໍລະດົກແຫ່ງຊາດ ແລະ ທ້ອງຖິ່ນ ໃຫ້ມີຄວາມຍືນຍົງ.

3) ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຊີຢາເສບຕິດທີ່ເກືອດຫ້າມ ແລະ ຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ເຊິ່ງເປັນການຈັດຕັ້ງຜັນຂະຫຍາຍມາດຕາ 2 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບປີ 2021 ອອກເປັນມະຕິຂອງສະພາແຫ່ງຊາດ ເພື່ອເປັນບ່ອນອີງໃຫ້ແກ່ການຄວບຄຸມ, ປ້ອງກັນ, ສະກັດກັ້ນ ແລະ ຕ້ານຢາເສບຕິດໃນສັງຄົມ ໃຫ້ຫຼຸດໜ້ອຍຖອຍລົງເທື່ອລະກ້າວ ແນໃສ່ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມໃຫ້ດີຂຶ້ນ.

4) ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027 ແລະ ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2025 ຂອງອົງ ການກວດສອບແຫ່ງລັດ ແລະ ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027 ເຊິ່ງກອງປະຊຸມສະເໜີໃຫ້ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ເອົາໃຈໃສ່ປັບປຸງແກ້ໄຂກົນໄກປະສານງານກັບເປົ້າໝາຍທີ່ຖືກກວດສອບ ໃຫ້ເປັນເຈົ້າການ ແລະ ຮ່ວມມືແກ້ໄຂຜົນຂອງການກວດສອບ-ກວດກາໃຫ້ທັນການ; ໃຫ້ມີການແບ່ງຂັ້ນຄຸ້ມຄອງຢ່າງຊັດເຈນ ລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ; ເພີ່ມການຝຶກອົບຮົມນັກກວດສອບ-ກວດກາ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ທາງດ້ານເຕັກນິກ, ວິຊາສະເພາະ ນຳໃຊ້ເຄື່ອງມືທີ່ທັນສະໄໝ ໃຫ້ມີຄວາມເຂັ້ມແຂງ ແລະ ເປັນມືອາຊີບ.

5) ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027, ກອງປະຊຸມຕີລາຄາສູງຕໍ່ສອງອົງການດັ່ງກ່າວ ທີ່ໄດ້ມີຄວາມພະຍາຍາມປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຕົວຈິງ ແລະ ມີຄວາມຍຸຕິທຳ; ໄດ້ເອົາໃຈໃສ່ຜັນຂະຫຍາຍມະຕິ, ຄຳສັ່ງຂອງສູນກາງພັກ ແລະ ມະຕິສະພາແຫ່ງຊາດ ເຂົ້າໃນການປັບປຸງຂະບວນການຍຸຕິທຳ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ.

ກອງປະຊຸມສະເໜີໃຫ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ ໂດຍຖືສຳຄັນດ້ານຄຸນທາດການເມືອງ, ມີຈັນຍາບັນ, ຈັນຍາທຳ ທີ່ໜັກແໜ້ນ; ບຳລຸງສ້າງ, ຍົກລະດັບຄວາມຮູ້, ຄວາມສາມາດ, ສ້າງໃຫ້ມີຄວາມຊຳນານງານ ກາຍເປັນມືອາຊີບ; ຕິດຕາມກວດກາການປະຕິບັດໜ້າທີ່ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຕ່ລະຂັ້ນ ໃຫ້ເຂັ້ມງວດ; ເອົາໃຈໃສ່ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ຄ້າຍດັດສ້າງ ແລະ ຄ້າຍຄຸມຂັງ; ການກັກຕົວ, ຈັບຕົວ, ການກັກຂັງພາງ ໃຫ້ຮັບປະກັນການດຳເນີນຄະດີຖືກຕ້ອງຕາມກົດໝາຍ, ມີຄວາມໂປ່ງໃສ ແລະ ຍຸຕິທຳ; ແກ້ໄຂບັນຫານັກໂທດຖືກກັກຂັງທີ່ບໍ່ມີຄຳຕັດສິນ ໃຫ້ໄວ; ເອົາໃຈໃສ່ປະເມີນການປະຕິບັດໜ້າທີ່ ແລະ ການປະພຶດຂອງຜູ້ພິພາກສາ.

6) ພິຈາລະນາ, ຮັບຮອງເອົາບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວ

ອ່ານຕໍ່ຈາກໜ້າ 3

ສຸມທອມພິດປິດ...

(ຕໍ່ຈາກໜ້າ 2)

ວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027 ເຊິ່ງກອງປະຊຸມໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການເຄື່ອນໄຫວຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ໃນຕະຫຼອດໄລຍະເກືອບໜຶ່ງປີ ໃນການປະຕິບັດສາມພາລະບົດບາດຂອງຕົນ ໄດ້ມີຜົນສຳເລັດຫຼາຍດ້ານ, ສະແດງເຖິງຄຸນນະພາບໃນການເຄື່ອນໄຫວວຽກງານຂອງສະມາຊິກສະພາ ໄດ້ຮັບການຍົກສູງຂຶ້ນ, ປະຊາຊົນມີຄວາມສິນໃຈ ແລະ ຕິດຕາມການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຫຼາຍຂຶ້ນ.

ກອງປະຊຸມໄດ້ສະເໜີໃຫ້ເອົາໃຈໃສ່ຕໍ່ການຍົກສູງຄຸນນະພາບການເຄື່ອນໄຫວຂອງສະພາແຫ່ງຊາດ ເປັນຕົ້ນ ການສ້າງ ແລະ ປັບປຸງກົດໝາຍ ໃຫ້ໄປຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ມີຄຸນນະພາບດີຂຶ້ນ, ມີຄວາມສອດຄ່ອງກັບຄວາມເປັນຈິງ; ສູ້ຊົນເຮັດໃຫ້ການຕິກລົງບັນຫາສຳຄັນພື້ນຖານຂອງຊາດ ສອດຄ່ອງກັບແນວທາງ ນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ຮັບປະກັນຜົນປະໂຫຍດລວມຂອງຊາດ ກໍຄືສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ; ເອົາໃຈໃສ່ການຕິດຕາມກວດກາ ແລະ ສະເໜີພາກສ່ວນກ່ຽວຂ້ອງ ແກ້ໄຂຜົນການຕິດຕາມກວດກາບັນຫາເຄັ່ງຮ້ອນຂອງສັງຄົມ ໂດຍສະເພາະບັນຫາຜົນກະທົບຈາກໂຄງການລົງທຶນຂະໜາດໃຫຍ່, ທີ່ມີຄວາມຫຍຸ້ງຍາກ, ມີຜົນກະທົບຕໍ່ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ, ການໜັ່ງຕີງຂອງລາຄາສິນຄ້າ, ຄ່າຄອງຊີບສູງ ແລະ ອື່ນໆ.

ກອງປະຊຸມສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນຂອງຜູ້ຕາງໜ້າສູນກາງແນວລາວສ້າງຊາດ ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ເຊິ່ງໄດ້ສະເໜີໃຫ້ສະພາແຫ່ງຊາດ ຍົກສູງຄຸນນະພາບການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເລື້ອຍໆ ໂດຍສະເພາະການຕິດຕາມກວດກາ ແລະ ນຳເອົາຄຳຄິດເຫັນທີ່ສ່ອງແສງຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວບັນດາເຜົ່າ ສະເໜີລັດຖະບານມີວິທີແກ້ໄຂຜົນການຕິດຕາມກວດກາດັ່ງກ່າວ.

ກອງປະຊຸມໄດ້ຮັບຟັງການລາຍງານຜົນການຕິກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເລືອກຕັ້ງແທນດ້ວຍວິທີການສະເພາະ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ເພື່ອສືບຕໍ່ປະຕິບັດໜ້າທີ່ຂອງສະມາຊິກສະພາແຫ່ງຊາດ.

7) ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາຮ່າງກົດໝາຍ ຈຳນວນ 8 ສະບັບ ດ້ວຍຄະແນນສຽງແຕ່ 90.96% ຂຶ້ນໄປ ໃນນີ້, ກົດໝາຍສ້າງໃໝ່ 1 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ, ກົດໝາຍປັບປຸງ 7 ສະບັບ ຄື: (1) ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງໄຊເບີ, (2) ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, (3) ກົດໝາຍວ່າດ້ວຍການຈະລາຈອນທາງບົກ, (4) ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ, (5) ກົດໝາຍວ່າດ້ວຍການລ້ຽງປ້ອງກັນຄວາມສະຫງົບປະຊາຊົນລາວ, (6) ກົດໝາຍວ່າດ້ວຍການບິນພົນລະເຮືອນ, (7) ກົດໝາຍວ່າດ້ວຍລັດຖະບານ.

ນອກຈາກນັ້ນ, ກອງປະຊຸມໄດ້ຮັບຟັງການຂຶ້ນຊີ້ແຈງຕໍ່ຄຳຊັກຖາມຂອງທ່ານນາຍົກລັດຖະມົນຕີ, ບັນດາທ່ານໃນຄະນະລັດຖະບານ ທັງໝົດ 11 ທ່ານ ເຊິ່ງສະແດງເຖິງຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອສ້າງຄວາມເຂົ້າໃຈ, ຄວາມຮັບຮູ້ເຖິງສະພາບຕົວຈິງທີ່ລັດຖະບານພວມສຸມໃສ່ແກ້ໄຂໃນປັດຈຸບັນ.

ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ຄັ້ງນີ້ ແມ່ນໝາກຜົນລວມຍອດແຫ່ງສະຕິປັນຍາ ແລະ ການນຳໃຊ້ສິດປະຊາທິປະໄຕ ກໍຄືຜົນຂອງການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ, ອົງການລັດທີ່ກ່ຽວຂ້ອງ ທີ່ມີຄວາມພະຍາຍາມ ແລະ ມີມາດຕະການຕົວຈິງໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ຕົກໄປເທື່ອລະກ້າວ ເພື່ອສ້າງຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ການນຳພາຂອງພັກ, ການບໍລິຫານຂອງລັດຖະບານ ໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ມີຄວາມໜັກແໜ້ນຂຶ້ນເລື້ອຍໆ.

ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກກົມການເມືອງ ສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ, ຍ້ອນຄວາມຮັບຜິດຊອບສູງຂອງລັດຖະບານ, ບັນດາກະຊວງ, ອົງການລັດ ສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ແລະ ຂະແໜງການກ່ຽວຂ້ອງ ທີ່ໃຫ້ການຮ່ວມມື ແລະ ສະໜັບສະໜູນຢ່າງກວ້າງຂວາງ.

ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງກົມການເມືອງ ສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ທີ່ຍາມໃດກໍໄດ້ໃຫ້ການຊີ້ນຳຢ່າງໃກ້ຊິດຕໍ່ສະພາແຫ່ງຊາດໂດຍຕະຫຼອດມາ, ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາທ່ານການນຳພັກ-ລັດ, ອະດີດການນຳພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດຄັ້ງນີ້.

ຂອບໃຈມາຍັງປະຊາຊົນລາວບັນດາເຜົ່າ ຢູ່ພາຍໃນ ແລະ ພີ່ນ້ອງເຊື້ອຊາດລາວທີ່ຢູ່ຕ່າງປະເທດ ທີ່ໄດ້ໃຫ້ຄວາມສົນໃຈ, ຕິດຕາມຢ່າງຈົດຈໍ່ຕໍ່ການດຳເນີນກອງປະຊຸມຂອງພວກເຮົາໃນຄັ້ງນີ້ ແລະ ສົ່ງຄຳຄິດເຫັນຜ່ານໂທລະສັບສາຍດ່ວນມາຍັງກອງປະຊຸມເປັນຈຳນວນຫຼວງຫຼາຍ.

ຂໍສະແດງຄວາມຂອບໃຈຕໍ່ທຸກພາກສ່ວນກ່ຽວຂ້ອງ ທີ່ໄດ້ມີສ່ວນຮ່ວມເຂົ້າໃນຜົນສຳເລັດຂອງກອງປະຊຸມຄັ້ງນີ້ ເປັນຕົ້ນ ກອງເລຂານຸການກອງປະຊຸມ ທີ່ເອົາໃຈໃສ່ຮັບຜິດຊອບເນື້ອໃນ, ວຽກບໍລິຫານ-ພິທີການຮອບດ້ານ.

ຂໍຂອບໃຈຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ໄດ້ປະກອບສ່ວນເຮັດໃຫ້ກອງປະຊຸມມີຄວາມສະຫງົບ ປອດໄພທຸກປະການ ແລະ ຂອບໃຈຕໍ່ບັນດາສື່ມວນຊົນ ທີ່ໄດ້ເອົາໃຈໃສ່ເຜີຍແຜ່ການດຳເນີນກອງປະຊຸມສະພາແຫ່ງຊາດ ໃຫ້ສັ້ງຄົມໄດ້ເຂົ້າເຖິງ ເຊິ່ງເປັນການເພີ່ມຄວາມເຂົ້າໃຈຢ່າງເລິກເຊິ່ງຕໍ່ທຸກບັນຫາທີ່ນຳມາພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 2 ນີ້.

ກອງປະຊຸມສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຫ້ອງວ່າການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ລັດຖະບານ, ອົງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍບັນດາມະຕິທີ່ກອງປະຊຸມຄັ້ງນີ້ໄດ້ຮັບຮອງເອົາ ເຂົ້າໃນການປະຕິບັດວຽກງານຂອງແຕ່ລະພາກສ່ວນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ສຸດທ້າຍນີ້, ຂໍອວຍພອນໃຫ້ທ່ານເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ບັນດາທ່ານການນຳຂັ້ນສູງພັກ-ລັດ, ອະດີດການນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ ຕະຫຼອດຮອດພະນັກງານ, ທະຫານ-ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມສຸກໃນຄອບຄົວ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດຂອງຕົນ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍປະກາດປິດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

ສຳເລັດກອງປະຊຸມ...

(ຕໍ່ຈາກໜ້າ 1)

ພັກປະຊາຊົນປະຕິວັດລາວ, ປະທານປະເທດ; ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສະເຫຼີມໄຊ ກົມມະສິດ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ບັນດາທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວ ແລະ ແຂກຖືກເຊີນ.

ໃນອາລະສຸດທ້າຍຂອງການປະຊຸມ, ທ່ານ ບຸນຈັນ ສີວົງພັນ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຫົວໜ້າກອງເລຂານຸການກອງປະຊຸມ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2026 ແລະ ທິດທາງແຜນການປະຈຳປີ 2027; ຈາກນັ້ນ, ບັນດາທ່ານ ສສຊ ກໍໄດ້ສຸມໃສ່ປະກອບຄຳເຫັນຕໍ່ຮ່າງມະຕິ ແລະ ລົງຄະແນນສຽງເຫັນດີຮັບຮອງເອົາດ້ວຍຄະແນນສຽງສ່ວນຫຼາຍ.

ຕອນທ້າຍ, ທ່ານ ສອນໄຊ ສີພັນດອນ ໄດ້ກ່າວສຸມທອມພິດປິດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ X ຢ່າງເປັນທາງການ.
(ນາງ ປາກາລັກ ພົມມີໄຊ)

ປັບປຸງກົດໝາຍ...

(ຕໍ່ຈາກໜ້າ 1)

ກັນນີ້, ການລົງເຜີຍແຜ່ ແລະ ປະເມີນກົດໝາຍວ່າດ້ວຍລັດຖະບານສະບັບປີ 2021 ໃນໄລຍະຜ່ານມາ ຂອງ ຫສນຍ ຮ່ວມກັບພາກສ່ວນກ່ຽວຂ້ອງ ເຫັນວ່າມີຄຳເຫັນສະເໜີໃຫ້ມີການປັບປຸງ ແລະ ກຳນົດບາງເນື້ອໃນຂອງກົດໝາຍສະບັບນີ້ຄືນໃໝ່ ເພື່ອໃຫ້ສອດຄ່ອງກັບມະຕິຂອງພັກ, ການປັບປຸງກົງຈັກລັດຖະບານ, ລັດຖະທຳມະນູນ ສະບັບປີ 2025, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນສະບັບປີ 2025, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ການຈັດຕັ້ງປະຕິບັດວຽກງານຕົວຈິງຂອງລັດຖະບານ.

ທ່ານກ່າວວ່າ: ເມື່ອກົດໝາຍສະບັບນີ້ ຖືກຮັບຮອງ ແລະ ປະກາດໃຊ້ ຈະເປັນບ່ອນອີງສຳຄັນໃຫ້ແກ່ລັດຖະບານ ກໍຄືທ່ານນາຍົກ-ບັນດາທ່ານຮອງນາຍົກລັດຖະມົນຕີ ໃນການຄຸ້ມຄອງ, ບໍລິຫານວຽກງານ ຕາມພາລະບົດບາດທີ່ໄດ້ກຳນົດໄວ້ ເພື່ອຜົນປະໂຫຍດຂອງປະເທດຊາດ ແລະສັງຄົມ; ເຮັດໃຫ້ການບໍລິຫານວຽກງານຂອງລັດຖະບານ ມີຄວາມຖືກຕ້ອງ, ໂລ່ງລ່ຽນ ແລະ ສອດຄ່ອງກັບຈິດໃຈຂອງມະຕິ 03 ແລະ ມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃນການຫັນປ່ຽນຢ່າງຮອບດ້ານ, ເລິກເຊິ່ງ ແລະ ເປັນທັນສະໄໝ ທັງຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ໃນການບໍລິຫານລັດ; ເປັນບ່ອນອີງໃຫ້ແກ່ຂະແໜງການ ກໍຄືອົງການປົກຄອງທ້ອງຖິ່ນທຸກຂັ້ນ ຕະຫຼອດຮອດສັງຄົມ ໄດ້ສືບຕໍ່ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ຕາມໜ້າທີ່ ແລະ ພັນທະຂອງຕົນ ດ້ວຍຄວາມເປັນເຈົ້າການສູງຂຶ້ນ.

ສູນທອນພົດເປີດກອງປະຊຸມສະໄໝສາມັນເທື່ອທີ 2 ສະພາແຫ່ງຊາດ ຊຸດທີ X

(ສພຊ) - ໃນພິທີເປີດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X, ທ່ານ ນາງ ສູນທອນ ໄຊຍະຈັກ ຮັກສາການແທນປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພົດເປີດກອງປະຊຸມວ່າ: ມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ໄດ້ໄຂຂຶ້ນຢ່າງເປັນທາງການໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ,ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແລະ ມະຕິກອງປະຊຸມຄົບຄະນະສະໄໝວິສາມັນ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ທີ່ຫາກໍສຳເລັດລົງໃນ 2-3 ວັນຜ່ານມາ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້,ກອງປະຊຸມມີຄວາມປິຕິຍິນດີເປັນຢ່າງຍິ່ງ ແລະ ຖືເປັນກຽດຢ່າງສູງທີ່ໄດ້ຕ້ອນຮັບທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ຂໍສະແດງຄວາມຂໍ່ານັບຊົມເຊີຍຢ່າງສຸດອົກສຸດໃຈ; ຂໍສະແດງຄວາມຂໍ່ານັບຊົມເຊີຍ ແລະ ຍິນດີຕ້ອນຮັບບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານນາຍົກລັດຖະມົນຕີ, ບັນດາທ່ານສະມາຊິກລັດຖະບານ,ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາທ່ານໃນທູຕານຸທູດ, ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວ ແລະ ບັນດາຜູ້ຊີ້ຄຸນວຸດທິ, ຜູ້ຕາງໜ້າສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງສຸດໃຈ; ຂໍສະແດງຄວາມຊົມເຊີຍມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ທີ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ຢ່າງພ້ອມພຽງ.

ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2 ຄັ້ງນີ້ ເປັນໄລຍະທີ່ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ເວົ້າລວມ, ເວົ້າສະເພາະແມ່ນບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ X ຍັງຢູ່ໃນໄລຍະແຫ່ງຄວາມອາໄລອາວອນ ຢ່າງສຸດຊຶ້ງຕໍ່ການຈາກໄປຂອງທ່ານ ໄຊສົມພອນ ພົມວິຫານ ອະດີດກຳມະການກົມການເມືອງສູນກາງພັກ, ອະດີດປະທານສະພາແຫ່ງຊາດ ຊຸດທີ X; ເພື່ອສະແດງເຖິງຄວາມອາໄລອາວອນ, ຄວາມເຄົາລົບ, ນັບຖື, ຈົດຈຳຄຸນງາມຄວາມດີຂອງທ່ານ ໄຊສົມພອນ ພົມວິຫານ ເຊິ່ງເພິ່ນເປັນຜູ້ນຳພາ-ຊີ້ນຳ ແລະ ຮ່ວມກັບຄະນະປະຈຳສະພາແຫ່ງຊາດ ເຮັດສຳເລັດໜ້າທີ່ການເມືອງຂອງສະພາແຫ່ງຊາດ ຊຸດທີ IX ແລະ ໄດ້ສືບຕໍ່ນຳພາສະພາແຫ່ງຊາດ ຊຸດທີ X ພຽງໄດ້ 7 ເດືອນ; ເນື່ອງໃນໂອກາດນີ້, ຂ້າພະເຈົ້າຂໍຮຽນເຊີນບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມທັງໝົດຈົ່ງພ້ອມກັນລຸກຂຶ້ນກົ້ມຫົວໄວ້ອາໄລ 1 ນາທີ.

ຕະຫຼອດໄລຍະ 10 ເດືອນໃນປີ 2026, ເຖິງວ່າສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ໄດ້ຜັນແປໄປຢ່າງສັບສົນ, ວ່ອງໄວ, ສະຫຼັບຊັບຊ້ອນ, ຄາດຄະເນໄດ້ຍາກ ເຊິ່ງສິ່ງຜົນກະທົບຢ່າງໜັກໜ່ວງຕໍ່ບັນດາປະເທດໃນໂລກ ລວມທັງປະເທດພວກເຮົາ, ບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ໄພທຳມະຊາດທີ່ຮ້າຍແຮງຢູ່ບັນດາແຂວງຕ່າງໆ ຂອງ ສປປລາວ ທີ່ສົ່ງຜົນກະທົບໂດຍກົງຕໍ່ການພັດທະນາເສດຖະກິດ-ສັງຄົມ, ຕໍ່ການດຳລົງຊີວິດຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ລວມທັງປະຊາຊົນບັນດາເຜົ່າ, ແຕ່



ສະພາແຫ່ງຊາດ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ; ດ້ວຍການເອົາໃຈໃສ່ປະສານສົມທົບວຽກງານຮ່ວມກັນຢ່າງໃກ້ຊິດ ແລະ ມີຄວາມເປັນເອກະພາບສູງ ລະຫວ່າງສະພາແຫ່ງຊາດ, ລັດຖະບານ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ພາກສ່ວນທີ່ກ່ຽວຂ້ອງ ແລະ ມີການຮ່ວມມືຂອງປະຊາຊົນໃນຂອບເຂດທົ່ວປະເທດ, ເຮັດໃຫ້ການຜັນຂະຫຍາຍແນວທາງນະໂຍບາຍຂອງພັກໄດ້ເຂົ້າສູ່ລວງເລິກ, ໄດ້ຈັດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ລັດຖະບານໄດ້ຄົ້ນຄວ້າສະເໜີບັນດາມາດຕະການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເຊິ່ງໄດ້ຮັບການຈັດຕັ້ງປະຕິບັດຢ່າງຈິງຈັງກວ່າເກົ່າ, ເຮັດໃຫ້ປະເທດເຮົາສືບຕໍ່ມີສະຖຽນລະພາບດ້ານການເມືອງ, ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍ, ເສດຖະກິດຂອງປະເທດເຮົາສືບຕໍ່ມີການຂະຫຍາຍຕົວໃນທາງບວກ, ບັນດາຄາດໝາຍທາງດ້ານເສດຖະກິດ-ສັງຄົມ ສາມາດບັນລຸໄດ້ຕາມແຜນ ແລະ ຄາດໝາຍເປັນສ່ວນໃຫຍ່, ຈຳນວນໜຶ່ງປະຕິບັດໄດ້ລື່ນແຜນການ; ການສ້າງ ແລະ ປັບປຸງກົດໝາຍມີຄວາມສອດຄ່ອງກັບສະພາບຕົວຈິງ, ສ້າງໃຫ້ເປັນກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ຮັບໃຊ້ຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ, ຜັດທະນາປະເທດເຮົາໃຫ້ມີຄວາມໜັກແໜ້ນ ຕາມທິດປະຊາຊົນຮັ່ງມີ, ປະເທດຊາດມັ່ງຄັ່ງ, ເຂັ້ມແຂງ, ສັງຄົມມີປະຊາທິປະໄຕ, ສາມັກຄີປອງດອງ, ຍຸຕິທຳ ແລະ ສີວິໄລ, ອັນໄດ້ເຮັດໃຫ້ບົດບາດຂອງປະເທດເຮົາ ໄດ້ຮັບການຍົກສູງຟື້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາການເລືອກຕັ້ງບຸກຄະລາກອນຂັ້ນສູງຈຳນວນໜຶ່ງ.

2. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2026 ແລະ ທິດທາງແຜນການປະຈຳປີ 2027.

3. ພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບບັນຊີຢາເສບຕິດທີ່ເກືອດຫ້າມແລະຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມການນຳໃຊ້.

4. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027.

5. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027.

6. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027.

7. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງສານປະຊາຊົນສູງສຸດກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027.

8. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027.

9. ພິຈາລະນາ, ຮັບຮອງເອົາຮ່າງກົດໝາຍ ຈຳນວນ 8 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 1 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ; ກົດໝາຍປັບປຸງ 7 ສະບັບ ຄື: (1)ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງໄຊເບີ, (2) ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, (3)ກົດໝາຍວ່າດ້ວຍການຈະລາຈອນທາງບົກ, (4) ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ, (5)ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນລາວ, (6) ກົດໝາຍວ່າດ້ວຍການບິນພົນລະເຮືອນ ແລະ (7) ກົດໝາຍວ່າດ້ວຍລັດຖະບານ.

ນອກນັ້ນ, ກອງປະຊຸມຄັ້ງນີ້ ຍັງຈະໄດ້ຮັບຟັງການຊີ້ແຈງຂອງທ່ານນາຍົກລັດຖະມົນຕີ, ສະມາຊິກລັດຖະບານ ແລະ ພາກສ່ວນກ່ຽວຂ້ອງຈຳນວນໜຶ່ງຕໍ່ຄຳຊັກຖາມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 2ຂອງສະພາແຫ່ງຊາດຊຸດທີ X ເປັນກອງປະຊຸມທີ່ມີຄວາມໝາຍສຳຄັນຍິ່ງ ເພາະຈະໄດ້ມີການພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງທີ່ໄດ້ລາຍງານມາຂ້າງເທິງ. ສະນັ້ນ, ຂ້າພະເຈົ້າຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ,ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດ ເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງມີປະຊາທິປະໄຕ ແລະ ຮັບປະກັນຄວາມຖືກຕ້ອງຕາມກົດໝາຍກ້າວໄປເຖິງການຕົກລົງ ແລະ ຮັບຮອງເອົາບັນດາເນື້ອໃນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້; ຂໍຮຽກຮ້ອງມາຍັງທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ,ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ຕາມວາລະທີ່ໄດ້ກຳນົດໄວ້; ຮຽກຮ້ອງມາຍັງປະຊາຊົນບັນດາເຜົ່າ ຈົ່ງໄດ້ຕິດຕາມການດຳເນີນກອງປະຊຸມ ໂດຍຜ່ານພາຫະນະສື່ມວນຊົນ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ໃນນາມຜູ້ຮັກສາການແທນປະທານສະພາແຫ່ງຊາດ, ປະທານກອງປະຊຸມ, ຂ້າພະເຈົ້າຂໍປະກາດເປີດກອງປະຊຸມສະໄໝສາມັນເທື່ອທີ 2ຂອງສະພາແຫ່ງຊາດຊຸດທີ X ນັບແຕ່ເວລານີ້ເປັນຕົ້ນໄປ.

ປັບປຸງກົດໝາຍການບິນພົນລະເຮືອນ ແລະ ກົດໝາຍການຈະລາຈອນທາງບົກ ໃຫ້ສອດຄ່ອງກັບສະພາບປັດຈຸບັນ



(ສພຊ) - ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ວັນທີ 15 ຕຸລາ ນີ້, ທ່ານ ເຫຼັກໄຫຼ ສີວິໄລ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍການບິນພົນລະເຮືອນ ໂດຍຍົກໃຫ້ເຫັນສະພາບການຈັດຕັ້ງປະຕິບັດຜ່ານມາ, ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງ, ສະພາບການປັບປຸງ, ໂຄງປະກອບ ແລະ ເນື້ອໃນຕົ້ນຕໍ, ແລະ ຄາດຄະເນຜົນໄດ້ຮັບ ເພື່ອເຮັດໃຫ້ກົດໝາຍດັ່ງກ່າວ ມີເນື້ອໃນສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນ.

ການຄຸ້ມຄອງທາງດ້ານການບິນ ແມ່ນຕິດພັນກັບຫຼາຍຂະແໜງການ ເຮັດໃຫ້ການຈັດຕັ້ງປະຕິບັດນິຕິກຳທີ່ວາງອອກ ຍັງຈຳກັດ ແລະ ມີໜ້ອຍ. ສະນັ້ນ, ຈຶ່ງໄດ້ລວບລວມເອົາບັນຫາ, ເນື້ອໃນຂອງບັນດານິຕິກຳທີ່ນຳໃຊ້ຜ່ານມາ ເພື່ອກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການທີ່ກ່ຽວຂ້ອງໃຫ້ຊັດເຈນ ເພື່ອເຮັດໃຫ້ການຄຸ້ມຄອງມະຫາພາກ ມີປະສິດທິພາບ, ປະສິດທິຜົນສູງ ທັງຫັນໄປສູ່ການຄຸ້ມຄອງລະບົບທີ່ທັນສະໄໝ; ປັບນິຕິກຳທີ່ຍັງໃຊ້ໃນປັດຈຸບັນ ໃຫ້ສອດຄ່ອງກັບກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ; ເປັນເຄື່ອງມືໃນການຄຸ້ມຄອງຂອງລັດ ໃຫ້ຮັດກຸມ ແລະ ເປັນລະບົບ ໃນການຄຸ້ມຄອງມະຫາພາກ; ການດຳເນີນທຸລະກິດກ່ຽວກັບການບິນພົນລະເຮືອນ ໃຫ້ທັນສະໄໝ, ປອດໄພ, ໂປ່ງໃສ, ສາມາດຕິດຕາມກວດກາໄດ້ຢ່າງທັນການ ທັງປົກປັກຮັກສາຜົນປະໂຫຍດລວມຂອງຊາດຕໍ່ຜູ້ດຳເນີນທຸລະກິດປະກອບສ່ວນເຂົ້າໃນການສ້າງຖານລາຍຮັບເຂົ້າງົບປະມານແຫ່ງຊາດ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງມີກົດໝາຍທີ່ມີເນື້ອໃນຄົບຖ້ວນ, ຮັດກຸມ, ແທດເໝາະກັບສະພາບໃຫ້ຍາວນານ ແລະ ສາມາດຈັດຕັ້ງປະຕິບັດໄດ້.

ສະຫຼຸບແລ້ວ ການປັບປຸງກົດໝາຍວ່າດ້ວຍການບິນພົນລະເຮືອນ ແມ່ນມີຄວາມຈຳເປັນຢ່າງຍິ່ງເພື່ອແກ້ໄຂບັນ ຫາທີ່ເກີດຂຶ້ນໃຫ້ແທດເໝາະກັບສະພາບຄວາມເປັນຈິງ ທັງເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານທາງດ້ານການບິນພົນລະເຮືອນຢ່າງລວມສູນ, ມີປະສິດທິພາບ ແລະ ປະສິດທິຜົນສູງ ໂດຍສະເພາະການແກ້ໄຂການກວດກາ-ກວດສອບຂອງອົງການການບິນພົນລະເຮືອນສາກົນ (International Civil Aviation Organization - ICAO) ເພື່ອຮັບປະກັນບໍ່ໃຫ້ ສປປລາວ ຖືກທຸງແດງ.

ໃນວັນຕໍ່ມາ, ທ່ານ ເຫຼັກໄຫຼ ສີວິໄລ ໄດ້ສະເໜີປັບປຸງກົດໝາຍວ່າດ້ວຍການຈະລາຈອນທາງບົກ ເຊິ່ງທ່ານໃຫ້ຮູ້ວ່າ: ຜ່ານການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານຈະລາຈອນທາງບົກໃນໄລຍະຜ່ານມາ ເຫັນວ່າມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງໄດ້ປັບປຸງກົດໝາຍວ່າດ້ວຍການຈະລາຈອນທາງບົກສະບັບປີ 2012 ດ້ວຍເຫດຜົນດ້ານເຄື່ອງມືໃນການຄຸ້ມຄອງ ເຊັ່ນ: ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນປັດຈຸບັນ ຍັງບໍ່ທັນຄົບຖ້ວນ, ບາງເນື້ອໃນຍັງບໍ່ທັນຖືກຕ້ອງ ແລະ ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມໃນປັດຈຸບັນ ໂດຍສະເພາະວຽກງານຈະລາຈອນທາງບົກທີ່ມີການຂະຫຍາຍຕົວຢ່າງວອງໄວ; ຍັງບໍ່ທັນມີລະບົບຖານຂໍ້ມູນລວມສູນ ເຊິ່ງເຮັດໃຫ້ການເກັບກຳສະຖິຕິ, ການຕິດ ຕາມກ່ຽວກັບວຽກງານຈະລາຈອນທາງບົກ ຍັງມີຄວາມຫຍຸ້ງຍາກ; ດ້ານການແບ່ງຂັ້ນຄຸ້ມຄອງ: ການປະສານງານ ແລະ ການແບ່ງຄວາມຮັບຜິດຊອບລະຫວ່າງສູນກາງ ກັບ ທ້ອງຖິ່ນ ຍັງມີລັກສະນະຊ້ຳຊ້ອນ ແລະ ບໍ່ທັນມີປະສິດທິພາບເທົ່າທີ່ຄວນ.

ຄາດຄະເນຜົນໄດ້ຮັບຈາກກົດໝາຍສະບັບປັບປຸງໃໝ່:

1) ເປັນເຄື່ອງມືສຳຄັນໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດແຫ່ງຊາດດ້ານຄວາມປອດໄພທາງຫຼວງ ໄລຍະປີ 2021-2030, ສອດຄ່ອງກັບກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ, ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ; ສາມາດຍົກລະດັບການຄຸ້ມຄອງການຈະລາຈອນທາງບົກ ໃຫ້ມີຄວາມສະດວກ, ໂລ່ງລ່ຽນ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ, ເຮັດໃຫ້ຜູ້ນຳໃຊ້ລົດ, ນຳໃຊ້ທາງຫຼວງ ປະຕິບັດຖືກຕ້ອງຕາມກົດຈະລາຈອນທາງບົກ.

2) ເປັນບ່ອນອີງໃນການຈັດຕັ້ງປະຕິບັດຂອງເຈົ້າໜ້າທີ່ຄຸ້ມຄອງການຈະລາຈອນທາງບົກ ແນໃສ່ຫຼຸດຜ່ອນອຸບັດ ເຫດ, ຄວາມແອອັດໃນການສັນຈອນ; ປົກປ້ອງຊີວິດ, ຊັບສິນຂອງບຸກຄົນ, ຊັບສິນສາທາລະນະ; ແກ້ໄຂຄະດີຕ່າງໆກ່ຽວກັບການຈະລາຈອນທາງບົກທີ່ເກີດຂຶ້ນ; ຮັບປະກັນການເຊື່ອມໂຍງ-ເຊື່ອມຈອດກັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ ທັງເປັນການປະກອບສ່ວນເຂົ້າໃນການສ້າງລັດແຫ່ງ ສປປລາວ ໃຫ້ເປັນລັດທີ່ປົກຄອງດ້ວຍ

ອ່ານຕໍ່ຈາກໜ້າ 7

ປັບປຸງກົດໝາຍໃຫ້ເຂັ້ມແຂງ ເພື່ອຕ້ານອາຊະຍາກຳໄຊເບີ



(ສພຊ) ວັນທີ 20 ຕຸລານີ້, ທ່ານ ສັນຕິສຸກ ສິມມະລາວົງ ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳໄຊເບີ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໂດຍທ່ານໃຫ້ຮູ້ວ່າ: ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີສະບັບທຳອິດ ໄດ້ຖືກຮັບຮອງໃນກອງປະຊຸມ ສພຊ ຊຸດທີ VII ແລະ ປະກາດໃຊ້ຢ່າງເປັນທາງການເມື່ອເດືອນສິງຫາ 2015. ມາຮອດປັດຈຸບັນ, ສປປລາວ ໄດ້ມີການຂະຫຍາຍຕົວທາງດ້ານພື້ນຖານໂຄງລ່າງເຕັກໂນໂລຊີການສື່ສານຢ່າງກ້າວກະໂດດ, ຕົວເລກການນຳໃຊ້ອິນເຕີເນັດ, ສື່ສັງຄົມອອນລາຍ, ປັນຍາປະດິດ (AI), ການເຮັດທຸລະກຳການເງິນ, ການບໍລິການຝາກຂໍ້ມູນ ແລະ ລະບົບຖານຂໍ້ມູນຕ່າງໆ ໄດ້ເພີ່ມຂຶ້ນຢ່າງໄວວາ; ເພື່ອຕອບສະໜອງຕໍ່ການເຕີບໂຕດັ່ງກ່າວ, ລັດຖະບານໄດ້ຊຸກຍູ້ການຫັນເປັນດິຈິຕອນ ໂດຍເນັ້ນໃສ່ 3 ເສົາຄ້ຳຕົ້ນຕໍຄື: ລັດຖະບານດິຈິຕອນ, ເສດຖະກິດດິຈິຕອນ ແລະ ສັງຄົມດິຈິຕອນ.

ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບຄວາມສະດວກສະບາຍ ແລະ ການສ້າງໂອກາດໃໝ່ໆນັ້ນ, ພວກເຮົາຜັດຕ້ອງປະເຊີນກັບໄພຄຸກຄາມຈາກອາຊະຍາກຳໄຊເບີທີ່ເຂົ້າມາສ້າງຄວາມເສຍຫາຍ ເຊິ່ງພົບເຫັນເລື້ອຍໆ ແລະ ສ້າງຜົນກະທົບຫຼາຍ ແລະ ເປັນວົງກວ້າງຢູ່ປະເທດເຮົາໃນປັດຈຸບັນ ມີຫຼາຍຮູບແບບ ເປັນຕົ້ນ: ການສໍ້ໂກງທາງອອນລາຍ (Online Scams) ດ້ວຍ AI ແລະ Deepfake, ການເຈາະລະບົບ ແລະ ໂຈລະກຳຂໍ້ມູນ (Hacking & Data Breach) ຟື້ນຖານໂຄງລ່າງທີ່ສຳຄັນ, ການແຜ່ກະຈາຍຂ່າວປອມ ແລະ ຂະບວນການສໍ້ໂກງຜ່ານລະບົບໂທລະຄົມຄໍເຊັນເຕີ (Call Centers); ພ້ອມດຽວກັນ, ປີຜ່ານມາ ສປປລາວ ກໍໄດ້ເຂົ້າຮ່ວມໃນສົນທິສັນຍາວ່າດ້ວຍການຕ້ານອາຊະຍາກຳທາງໄຊເບີຂອງອົງການສະຫະປະຊາຊາດ ຢູ່ທີ່ນະຄອນຫຼວງຮ່າໂນ້ຍ, ສສ.ຫວຽດນາມ.

ດ້ວຍສະພາບການທີ່ຮ້າຍແຮງ ແລະ ປ່ຽນແປງໄວດັ່ງກ່າວນີ້, ຈຶ່ງເປັນສາເຫດສຳຄັນທີ່ຈຳເປັນຕ້ອງໄດ້ທົບທວນ ແລະ ປັບປຸງນິຕິກຳຄືນໃໝ່ຢ່າງຮີບດ່ວນ; ເປົ້າໝາຍສູງສຸດ ແມ່ນການສ້າງເຄື່ອງມືທາງກົດໝາຍທີ່ເຂັ້ມແຂງ, ຮັດກຸມ ແລະ ທັນສະໄໝ ເພື່ອປົກປ້ອງຄວາມໝັ້ນຄົງຂອງຊາດ, ເສດຖະກິດ-ສັງຄົມ ແລະ ລະບົບພື້ນຖານໂຄງລ່າງທີ່ສຳຄັນ ຈາກການໂຈມຕີທາງໄຊເບີ, ພ້ອມທັງສາມາດເຊື່ອມໂຍງກັບມາດຕະຖານ ແລະ ກົນໄກການຮ່ວມມືສາກົນ. ການປັບປຸງກົດໝາຍສະບັບນີ້ ຈຶ່ງມີຄວາມຈຳເປັນຢ່າງຍິ່ງທາງດ້ານເສດຖະກິດ-ສັງຄົມ ເພາະອາຊະຍາກຳໄຊເບີໄດ້ສ້າງຄວາມເສຍຫາຍຢ່າງມະຫາສານ; ພວກເຮົາຈຳເປັນຕ້ອງມີກົດໝາຍທີ່ເຂັ້ມແຂງ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ນັກລົງທຶນ, ຈຳເປັນຕ້ອງມີຂອບກົດໝາຍທີ່ຮອງຮັບການເກັບຮັກສາ ແລະ ນຳໃຊ້ຫຼັກຖານທາງດິຈິຕອນໃນຂັ້ນສານ, ແລະ ຮອງຮັບການເຊື່ອມໂຍງກັບສາກົນ.

ສຳລັບຜົນໄດ້ຮັບ ແລະ ຜົນກະທົບນັ້ນ, ທ່ານໃຫ້ຮູ້ວ່າ: ການມີນິຕິກຳທີ່ຮັດກຸມ ຈະຊ່ວຍໃຫ້ເຈົ້າໜ້າທີ່ມີບ່ອນອີງທາງກົດໝາຍທີ່ຈະແຈ້ງໃນການດຳເນີນຄະດີກັບຮູບແບບອາຊະຍາກຳໃໝ່ໆ; ພ້ອມກັນນັ້ນ, ປະຊາຊົນ ແລະ ທຸລະກິດ ຈະໄດ້ຮັບການປົກປ້ອງຊັບສິນ ແລະ ຂໍ້ມູນສ່ວນຕົວ, ລະບົບພື້ນຖານໂຄງລ່າງທີ່ສຳຄັນ ເຊັ່ນ: ທະນາຄານ, ໂທລະຄົມ, ພະລັງງານ, ການຄ້າ, ສາທາລະນະສຸກ,... ຈະປອດໄພຂຶ້ນ ເຊິ່ງຈະເປັນການສົ່ງເສີມການຂະຫຍາຍຕົວຂອງເສດຖະກິດດິຈິຕອນ. ເຖິງຢ່າງໃດກໍຕາມ, ກໍມີສິ່ງທ້າທາຍທີ່ຕ້ອງລະມັດລະວັງ ເຊັ່ນ: ຜູ້ໃຫ້ບໍລິການອິນເຕີເນັດ ແລະ ໂທລະຄົມ ອາດຈະຕ້ອງຮັບພາລະຕົ້ນທຶນທີ່ເພີ່ມຂຶ້ນໃນການຈັດຫາລະບົບເກັບຮັກສາຂໍ້ມູນ; ນອກຈາກນີ້, ຕ້ອງລະມັດລະວັງການກຳນົດຖານຄວາມຜິດໃຫ້ ຈະແຈ້ງ ເພື່ອບໍ່ໃຫ້ເກີດຄວາມສ່ຽງທີ່ຈະຖືກເບິ່ງວ່າ ເປັນການຈຳກັດສິດເສລີພາບໃນການສະແດງອອກຂອງປະຊາຊົນ.

ກິດຈະກຳບາມເຕະ ຫສຊ-ຟຟລ

(ສພຊ) - ຕອນແລງ ວັນທີ 21 ຕຸລາ 2026, ຫ້ອງວ່າການສະພາແຫ່ງຊາດ (ຫສຊ) ໄດ້ສ້າງກິດຈະກຳກິລາບາມເຕະມິດຕະພາບ ຍິງ-ຊາຍ ຮ່ວມກັບ ບໍລິສັດ ລັດວິສາຫະກິດ ໄຟຟ້າລາວ (ຟຟລ) ທີ່ເດີ່ນກິລາເຝືອຣິ, ນະຄອນຫຼວງວຽງຈັນ ໂດຍມີທ່ານ ບຸນຈັນ ສີວົງພັນ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ບັນດາທ່ານຮອງຫົວໜ້າ ຫສຊ, ຮອງຜູ້ອຳນວຍການໃຫຍ່ ຟຟລ, ພະນັກງານ-ລັດຖະກອນ ແລະ ນັກກິລາຂອງທັງສອງພາກສ່ວນ ເຂົ້າຮ່ວມຢ່າງຟົດຟື້ນ.



ການຈັດກິດຈະກຳຄັ້ງນີ້ ຈຸດປະສົງເພື່ອສ້າງຂະບວນການຂ່ຳນັບຊຸມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ແລະ ຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ທີ່ຈະໄດ້ດຳເນີນຂຶ້ນໃນຕໍ່ໜ້ານີ້ ທັງເປັນການຮັດແໜ້ນຄວາມສາມັກຄີລະຫວ່າງພະນັກງານ-ລັດຖະກອນຂອງສອງພາກສ່ວນ ໃຫ້ນັບມື້ມີຄວາມແໜ້ນແຟ້ນຍິ່ງໆຂຶ້ນ ທັງເປັນການສົ່ງເສີມການຫຼິ້ນກິລາອອກກຳລັງກາຍເພື່ອສຸຂະພາບທີ່ແຂງແຮງ; ຫຼັງຈາກນັ້ນ, ໄດ້ມີການຮ່ວມພາເຂົ້າສາມັກຄີ ເພື່ອເພີ່ມທະວີຄວາມສະໜິດສະໜົມຮັກແພງເຊິ່ງກັນແລະກັນຕື່ມອີກ.



ກອງປະຊຸມ... (ຕໍ່ຈາກໜ້າ 1)

ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ເຊິ່ງທ່ານໃຫ້ຮູ້ວ່າ:

ກອງປະຊຸມຄັ້ງນີ້ ໄດ້ດຳເນີນຂຶ້ນນັບແຕ່ວັນທີ 5-21 ຕຸລາ 2026 ໂດຍໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ເຊິ່ງໄດ້ອອກເປັນມະຕິ ຈຳນວນ 17 ສະບັບ ຄື:

1. ມະຕິຮັບຮອງເອົາການເລືອກຕັ້ງປະທານສະພາແຫ່ງຊາດ ດ້ວຍຄະແນນສຽງເປັນເອກະສັນ.

2. ມະຕິຮັບຮອງເອົາການເລືອກຕັ້ງ ນາຍົກລັດຖະມົນຕີ ດ້ວຍຄະແນນສຽງເປັນເອກະສັນ.

3. ມະຕິຮັບຮອງເອົາບົດລາຍງານຂອງລັດຖະບານ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2026 ແລະ ທິດທາງແຜນການປະຈຳປີ 2027 ດ້ວຍຄະແນນສຽງເຫັນດີ 99.39%.

4. ມະຕິຮັບຮອງເອົາບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ2027 ແລະບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2025 ດ້ວຍຄະແນນສຽງເຫັນດີ 96.91%.

5. ມະຕິຮັບຮອງເອົາບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ 2027 ດ້ວຍຄະແນນສຽງເຫັນດີ 99.38%.

6. ມະຕິຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ວ່າດ້ວຍການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2027 ດ້ວຍຄະແນນສຽງເຫັນດີ100%.

9. ມະຕິຮັບຮອງເອົາບົດລາຍງານກ່ຽວກັບບັນຊີຢາເສບຕິດທີ່ເກືອດຫ້າມ ແລະ ຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ດ້ວຍຄະແນນສຽງເຫັນດີ 97.51%.

10. ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການປົກປ້ອງເງິນຝາກ (ສ້າງໃໝ່) ດ້ວຍຄະແນນສຽງເຫັນດີ 96.31%.

11. ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳໄຊເບີ ດ້ວຍຄະແນນສຽງເຫັນດີ 98.17%.

12. ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍຄະແນນສຽງເຫັນດີ 90.96%.

13. ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການຈະລາຈອນທາງບົກ ດ້ວຍຄະແນນສຽງເຫັນດີ 97.56%.

14. ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ດ້ວຍຄະແນນສຽງເຫັນດີ 97.51%.

15. ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນລາວ ດ້ວຍຄະແນນສຽງເຫັນດີ 99.39%.

16. ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍການບິນພົນລະເຮືອນ ດ້ວຍຄະແນນສຽງເຫັນດີ 97.56%.

17. ມະຕິວ່າດ້ວຍການຮັບຮອງເອົາກົດໝາຍວ່າດ້ວຍລັດຖະບານ ດ້ວຍຄະແນນສຽງເຫັນດີ 98.17%.

ຜົນການຮັບຮອງ... (ຕໍ່ຈາກໜ້າ 1)

ຮັບຄະແນນສຽງເຫັນດີ 157 ທ່ານ ກວມເອົາ 96.31%, ບໍ່ເຫັນດີ 6 ທ່ານ ກວມເອົາ 3.68% ແລະ ບໍ່ອອກສຽງ 0 ທ່ານ ກວມເອົາ 0%.

- ກົດໝາຍປັບປຸງ 7 ສະບັບ:

1) ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງ ໂດຍທ່ານຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ; ມີຜູ້ແທນເຂົ້າຮ່ວມ 161 ທ່ານ, ໄດ້ຮັບຄະແນນສຽງເຫັນດີ 157 ທ່ານ ກວມເອົາ 97.51%, ບໍ່ເຫັນດີ 3 ທ່ານ ກວມເອົາ 1.86% ແລະ ບໍ່ອອກສຽງ 1 ທ່ານ ກວມເອົາ 0.62%.

2) ກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນລາວ ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງ ໂດຍທ່ານລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ; ມີຜູ້ແທນເຂົ້າຮ່ວມ 165 ທ່ານ, ໄດ້ຮັບຄະແນນສຽງເຫັນດີ 164 ທ່ານ ກວມເອົາ 99.39%, ບໍ່ເຫັນດີ 1 ທ່ານ ກວມເອົາ 0.6% ແລະ ບໍ່ອອກສຽງ 0 ທ່ານ ກວມເອົາ 0%.

3) ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງ ໂດຍທ່ານລັດຖະມົນຕີກະຊວງສາທາລະນະສຸກ; ມີຜູ້ແທນເຂົ້າຮ່ວມ 166ທ່ານ, ໄດ້ຮັບຄະແນນສຽງເຫັນດີ 151 ທ່ານ ກວມເອົາ 90.69%, ບໍ່ເຫັນດີ 14 ທ່ານ ກວມເອົາ 8.43% ແລະ ບໍ່ອອກສຽງ 1 ທ່ານ ກວມເອົາ 0.6%.

4) ກົດໝາຍວ່າດ້ວຍການບິນພົນລະເຮືອນ ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງ ໂດຍທ່ານລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ); ມີຜູ້ແທນເຂົ້າຮ່ວມ 164 ທ່ານ, ໄດ້ຮັບຄະແນນສຽງເຫັນດີ 160 ທ່ານ ກວມເອົາ 97.56%, ບໍ່ເຫັນດີ 2 ທ່ານ ກວມເອົາ 1.21% ແລະ ບໍ່ອອກສຽງ 2 ທ່ານ ກວມເອົາ 1.21%.

5) ກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງ ໂດຍທ່ານລັດຖະມົນຕີກະຊວງ ຍທຂ; ມີຜູ້ແທນເຂົ້າຮ່ວມ 164 ທ່ານ, ໄດ້ຮັບຄະແນນສຽງເຫັນດີ 160 ທ່ານກວມເອົາ97.56%, ບໍ່ເຫັນດີ 2 ທ່ານ ກວມເອົາ 1.21 % ແລະ ບໍ່ອອກສຽງ 2 ທ່ານ ກວມເອົາ 1.21%.

6) ກົດໝາຍວ່າດ້ວຍລັດຖະບານ ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງ ໂດຍທ່ານລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ມີຜູ້ແທນເຂົ້າຮ່ວມ 164 ທ່ານ, ໄດ້ຮັບຄະແນນສຽງເຫັນດີ 161 ທ່ານ ກວມເອົາ 98.17%, ບໍ່ເຫັນດີ 2 ທ່ານ ກວມເອົາ 1.21 % ແລະ ບໍ່ອອກສຽງ 1 ທ່ານ ກວມເອົາ 0.6%.

7) ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳໄຊເບີ ສະເໜີເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງ ໂດຍທ່ານລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ; ມີຜູ້ແທນເຂົ້າຮ່ວມ 164 ທ່ານ, ໄດ້ຮັບຄະແນນສຽງເຫັນດີ 161 ທ່ານ ກວມເອົາ 98.71%, ບໍ່ເຫັນດີ 2 ທ່ານ ກວມເອົາ 1.2% ແລະ ບໍ່ອອກສຽງ 1 ທ່ານ ກວມເອົາ 0.6%.

ທ່ານກ່າວຕື່ມອີກວ່າ: ການຮັບຮອງເອົາກົດໝາຍ 8 ສະບັບນີ້ ແມ່ນຜົນສຳເລັດທີ່ສຳຄັນໃນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ແລະ ແຜນການສ້າງແລະປັບປຸງກົດໝາຍ ປະຈຳປີ 2026 ທັງເປັນການປະກອບສ່ວນສຳຄັນໃນການປັບປຸງ ແລະ ເພີ່ມທະວີພາທະບົດບາດໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ເປັນລະບຽບຮັດຂຶ້ນຕື່ມ ເພື່ອຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ປະຊາຊົນລາວບັນດາເຜົ່າ, ສະກັດກັ້ນ ແລະ ຕ້ານບັນດາປາກົດການຫຍໍ້ທໍ້ທີ່ເປັນພຶດຕິກຳລະເມີດກົດໝາຍຢູ່ໃນສັງຄົມ, ປະກອບສ່ວນໃນການສ້າງລັດເຮົາໃຫ້ເປັນລັດປະຊາທິປະໄຕທີ່ປົກຄອງດ້ວຍກົດໝາຍ ໃຫ້ເຂັ້ມງວດຂຶ້ນ; ບັນດາກົດໝາຍເຫຼົ່ານັ້ນເຖິງວ່າໄດ້ຮັບຮອງເອົາແລ້ວກໍຕາມ, ກຳມາທິການກົດໝາຍ ແລະ ຍຸຕິທຳ ຍັງຈະໄດ້ສືບຕໍ່ພົວພັນປະສານກັບບັນດາກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຄະນະຮັບຜິດຊອບແຕ່ລະກົດໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງ ປັບປຸງ, ຮຽບຮຽງເນື້ອໃນຮ່າງກົດໝາຍໃຫ້ສຳເລັດ ແລະ ສົມບູນ ເພື່ອລາຍງານຄະນະປະຈຳສະພາແຫ່ງຊາດ ກ່ອນສະເໜີທ່ານປະທານປະເທດ ພິຈາລະນາອອກລັດຖະດຳລັດປະກາດໃຊ້ຢ່າງເປັນທາງການ ຕາມກົດໝາຍກຳນົດໄວ້.



ສຸມສະບາຍຫາຍໃຈ

ຄຸນປະໂຫຍດຂອງຜັກຫິ້ມຕໍ່ສຸຂະພາບ

 # ຮຽບຮຽງໂດຍ: ຫອມສະນິດ



ຜັກຫິ້ມ (Amaranth) ເປັນຜັກພື້ນບ້ານທີ່ມີຄຸນຄ່າທາງໂພຊະນາການສູງຫຼາຍ, ເປັນຜັກທີ່ມີຄ່ານ້ຳຕານຕ່ຳ, ອຸດົມໄປດ້ວຍວິຕາມິນ, ແຮ່ທາດ ແລະ ສານຕ້ານອະນຸມູນອິດສະຫຼະ ເຊິ່ງນິຍົມນຳມາປຸງແຕ່ງອາຫານໃນລາວ ເຊິ່ງມີຄຸນປະໂຫຍດຫຍັງ ແດ່ມາເບິ່ງນຳກັນເລີຍ:

- ຊ່ວຍບຳລຸງເລືອດ ແລະ ປ້ອງກັນພະຍາດໂລຫິດຈາງ: ມີທາດເຫຼັກ (Iron), ຊ່ວຍໃນການສ້າງຮີໂມໂກຼບິນໃນເມັດເລືອດແດງ.

- ຊ່ວຍເສີມສ້າງກະດູກ ແລະ ຟັນໃຫ້ແຂງແຮງ: ມີແຄລຊຽມ (Calcium) ແລະ ແມກນີຊຽມ, ຊ່ວຍປ້ອງກັນພະຍາດກະດູກພ່ອຍ.

- ຊ່ວຍໃນການຂັບຖ່າຍ: ອຸດົມໄປດ້ວຍເສັ້ນໃຍອາຫານ (Fiber), ຊ່ວຍໃຫ້ລະບົບຍ່ອຍອາຫານເຮັດວຽກໄດ້ດີ ແລະ ປ້ອງກັນອາການທ້ອງຜູກ.

- ບຳລຸງສາຍຕາ: ມີວິຕາມິນ A ແລະ ເບຕ້າຄາໂຣທີນ ສູງ, ຊ່ວຍບຳລຸງຈໍປະສາດຕາ ແລະ ຫຼຸດຄວາມສ່ຽງຕາຟາງ.

- ເສີມສ້າງພູມຄຸ້ມກັນ: ມີວິຕາມິນ C ສູງ, ຊ່ວຍໃຫ້ຮ່າງກາຍແຂງແຮງ, ທົນທານຕໍ່ການຕິດເຊື້ອ ແລະຊ່ວຍໃຫ້ບາດແຜຫາຍດີໄວ.

- ຫຼຸດລະດັບຄໍເລດສະເຕີໂຣນ: ມີສານຕ້ານອະນຸມູນອິດສະຫຼະ ແລະ ເສັ້ນໃຍທີ່ຊ່ວຍດັກຈັບໄຂມັນໃນເສັ້ນເລືອດ.

ຂໍ້ຄວນລະວັງ:

- ຜູ້ທີ່ມີປະວັດເປັນໜີ້ວໃນໄຕ: ຄວນຫຼີກລ່ຽງການກິນຜັກຫິ້ມດິບໃນປະລິມານຫຼາຍ ເພາະມີສານອອກຊາເລດ (Oxalate) ສູງ.

- ຄວນປຸງແຕ່ງໃຫ້ສຸກກ່ອນກິນ: ການຕົ້ມ ຫຼື ຂົ້ວ ຈະຊ່ວຍຫຼຸດປະລິມານສານອອກຊາເລດ ແລະ ຍັງເຮັດໃຫ້ຮ່າງກາຍດູດຊຶມແຮ່ທາດໄດ້ດີຂຶ້ນ.



ຕົ້ນຕາຍ ຕະເລ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

 # ສຸມໜ້ຽນ

❋ **ກອງ**ປະຊຸມສະໄໝສາມັນເທື່ອ 2 ຂອງສະພາປະຊາຊົນແຂວງໃບຂອບເຂດທົ່ວປະເທດ ໄດ້ໄຂຂຶ້ນຢ່າງເປັນທາງການ ບ່າໜ້າພາທາງໂດຍສະພາປະຊາຊົນບະຄອບຫຼວງວຽງຈັນ ໄດ້ໄຂຂຶ້ນໃນວັນທີ 10-13 ພະຈິກ 2026 ຂ່ຂື່ນຈົ່ມກ່າວຍ້ອງ ບັກລ່າວ ສພຊ ເປັນເຈົ້າການຮຽບຮ້ຽບ ແລະ ລ່າວສານສະໜອງເບື້ອງ ໜັງສືພິມຜູ້ແທນໃຫ້ ໂຄສະນາເຜີຍແຜ່ ຕື່ອສັງຄົມໄດ້ຮັບຮູ້ ຜົນງານອ້ຳງອດໃຊ້ **ຈອບແລ້ວ!**

❋ **ຕາມ**ລ່າວໃຫ້ຮູ້ວ່າ ບຸນບະນັດສະການພະຫາດຫຼວງວຽງຈັນ ແລະ ງານວາງສະແດງສິນຄ້າ ຈະເລີ່ມຂຶ້ນໃນວັນທີ 20-24 ພະຈິກນີ້ ເຊິ່ງໃນປີນີ້ ຈະມີການຈັດຫຼາກຫຼາຍກິດຈະກຳ ມີການບ່າສິນຄ້າໂອດ້ອບຈາກຕື່ອປະເທດມາວາງຂາຍເປັນເທດສະການໃຫຍ່ປະຈຳປີ ໄພ່ຟ້າຕື່ອແຄ້ມແດນລາວຮັບຊາບ ບຸນບະນັດສະການ ພະຫາດໃຫຍ່ມີງານ້ຳ ແນບນາມເຊື້ອ ແດນລາວເມືອງໃຫຍ່ ຂ່ໃຫ້ເຮືອງຮຸ່ງແຈ້ງ ເບີ່ງແຍງໄພ່ຟ້າຫື່ອສາສາ ບັ້ນຫ້ອນ! ຮຽນຂ່ຝາກເປັນກອບກ່າວເອົ້າ ຈົ່ງໂຮມຮ່ວມແຮງກັນ ຮັກສາອະນາໄມ ໃສ່ໃຈເກັບມ້ຽນ ສິ່ງເສດເຫຼືອໃນມື້ນັ້ນ ເກັບອ່ວງໃຫ້ຄຶກບ່ອນ ເພື່ອຕອບລາເລີກແລ້ວ ຊິສະອາດງ້ຽງດັ່ງເດີມ **ນັ້ນແລ້ວ!**

ຊອບຍິ້ມ

 # ພັ້ງລຶ

ເລື່ອງ: ໄກ່ເອົ້າໄດ້

ຊາຍໜຸ່ມຄົນໜຶ່ງກຳລັງນັ່ງອ່ານໜັງສືພິມຢູ່ຫ້ອງຮັບແຂກ, ຢູ່ໆຜູ້ເປັນເມຍກໍໄດ້ຍ່າງມາຫາງຫຼັງແລ້ວຕົບຫົວ ຜົວ ຜົວ!!!!!! ບາດໜຶ່ງ

ຜົວ: ເຈົ້າຕີຫົວຂ້ອຍເຮັດຫຍັງ

ເມຍ: ຂ້ອຍເຫັນເຈ້ຍບ້ອຍຢູ່ໃບຖົງໃສ່ງເຈົ້າ ຂຽນຊື່ວ່າ ແຈ້, ບອກມາແມ່ນໃຜ

ຜົວ: ໂອ້ຍ... ເມຍເອີຍ! ເຈົ້າຈີ້ໄດ້ບໍ ຄິດແລ້ວຂ້ອຍໄປເບິ່ງຕີໄກ່, ແຈ້ ແມ່ນຊື້ໄກ່ຕີ້ຂ້ອຍລົງເງິນເດ

ເມຍ: ແມ່ນວາ ບ້ອງຂ່ໂຫດເດີຂ້ຶ້ນບາ; ແລ້ວຜູ້ເປັນເມຍກະເຮັດວຽກຕ່ ສາມນ້ຶ່ຕ່ມາ, ໃນຂະນະທີ່ຜູ້ເປັນຜົວນັ່ງອ່ານໜັງສືພິມຍົກກະຕີຢູ່ນັ້ນ ຜູ້ເປັນເມຍກໍໄດ້ຕົບຜົວ ດັງຜົວ!!!!! ຕື່ມອີກ ຜູ້ເປັນຜົວໃນໃຫ້ເລີຍເວົ້າຂຶ້ນວ່າ: ເຈົ້າຕົບຫົວຂ້ອຍເຮັດຫຍັງ?

ເມຍ: ເອົ້ານ້ຶ... ໄກ່ຂອງນ້ຶງໂຫມາ

ຜົວ!!!!!!!!

ສຸພາສິດ-ຄະຕິເຕືອນໃຈ

 # ດອກຫຍ້າ

"ບ້ານຸ່ນເອົ້າໄວ້ໃນ ບ້ານໃສເອົ້າໄວ້ນອກ"

ອາດ ກະອີ ລາວ

ວິຊາໂກງ

 # ໂດຍ: ຄຳບຸນມີ ລອນວິໄຊ

❋ ເຫັນຜູ້ ໂກງກັ່ນກ້າ
ແຕ່ລະຄົນຄຶດຄຸ
ສຸກສະບາຍຫາຍຮ້ອນ
ຊົນຊວນກັນຊໍ່ຊ້ອງ

❋ ເຮືອນຊານສົມຊື່ຮ້ອງ
ຈັ່ງແມ່ນດິນດອນຫລາຍ
ບຸດຕິ ບຸດຕານ້ອຍ
ວັນວ່າງທຽວທ່ອງຜຸ້ນ ວັນບຸນບືນເບິ່ງຜີ

❋ ຊັບຊຸມໂກງວ່ານັ້ນ
ຂຶນບັນຍາຍຍາວໆ
ຕາມລາງລີ ລາງເວົ້າ
ດ້ານດັ່ງບຸນເກົ່າກີ້ ກຸສົນສີສິ່ງຍູ້

❋ ຫລາຍໂຮງຮຽນທຸກຊັ້ນ
ພູມເຜະຫຍາການໂກງ
ສອນໃຫ້ຊົນຊຳນານຮູ້
ຊອກຫາລາຍຫລ່ຽມກັ້ງ ບັງບ່ຽງບາຍບິບບີ

❋ ທຸກຄົນຄຶງມ່ວນແມ້ງ
ທຸກລະທົມຫລືຈະເຫລືອ
ໃຜກຳພຸງຜີພ້ຽງ
ເຈົ້າໂກງຂ້ອຍ-ຂ້ອຍໂກງເຈົ້າ ທັງເຂົາທັງເຮົາດ້ວຍ ຊິລວຍລົ້ນລື່ນແຕ່ຫລັງ ຫັ້ນແຫລ້ວ!

ໂກຍຮັ່ງໂຮມຕົນ
ມາກມຸນມີໄວ້
ກິນນ້ຳອົມອົມມ່ວນ
ຍໍ້ຍ້ອງຍື່ນນິຍົມ

ຫໍແຫ່ງວິມານແມນ
ລືດລາເຫລືອໃຊ້
ເນົາໃນປະເທດຕ່າງ
ສູຂີໄດ້ດັ່ງປະສົງ

ຄັນກ່າວຈະເກີນຄືນ
ຈ່າວແຈ້ງຈະຫລາຍມື້
ເຮືອນເຂົາມະຫາຮັ່ງ
ຊຸຊ້ວ້ານສູ່ສະບາຍ

ບັນຈຸແຕ່ຊຸມວິຊາ
ເກັ່ງໂກຍ ກຽມໄວ້
ເຫັນຮູ ອຸບາຍບອກ
ດີໄດ້ໃສ່ຕົນ

ແລງຄ່ຳຄອງສະໜຸກ
ເມື່ອໂກຍກິນໄດ້
ພຽງກັນກ່ຳເກົ່ງ

ປັບປຸງກົດໝາຍ...

(ຕໍ່ຈາກໜ້າ 5)

ກົດໝາຍເທື່ອລະກ້າວ.

3) ດຶງດູດການຮ່ວມມືດ້ານວິຊາການ, ການຊ່ວຍເຫຼືອຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ເຂົ້າໃນວຽກງານການຈະລາຈອນທາງບົກໃຫ້ຫຼາຍຂຶ້ນ.

4) ເຮັດໃຫ້ການແບ່ງຂັ້ນຄຸ້ມຄອງ ແລະ ແບ່ງຄວາມຮັບຜິດຊອບລະຫວ່າງສູນກາງ ແລະ ທ້ອງຖິ່ນ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

5) ສ້າງວຽກເຮັດງານທຳ ແລະ ຍົກລະດັບຄຸນນະພາບຊີວິດຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.

6) ສ້າງຄວາມເຊື່ອໝັ້ນໃຫ້ແກ່ພາກທຸລະກິດ, ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ຕໍ່ວຽກງານການຈະລາຈອນທາງບົກໃນ ສປປລາວ.

ສະເໜີລັດຖະບານ...

(ຕໍ່ຈາກໜ້າ 1)

ຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2026 ແລະ ທິດທາງແຜນການປີ 2027 ເຊິ່ງທ່ານກ່າວວ່າ: ພາຍຫຼັງຮັບຟັງການລາຍງານຈາກລັດຖະບານ, ຄະນະປະຈຳສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດໄດ້ສຸມສະຕິປັນຍາລົງເລິກຄົ້ນຄວ້າ, ວິເຄາະ-ວິໄຈ ລວມທັງນຳເອົາຄຳຄິດຄຳເຫັນຂອງພໍ່ແມ່ປະຊາຊົນ ມາເປັນການຕີລາຄາ, ປະກອບຄຳເຫັນ ດ້ວຍຄວາມຮັບຜິດຊອບສູງ, ມີຈຸດສຸມ ແລະ ຝຶດຝົ້ນ ເຊິ່ງສາມາດເຫັນໄດ້ບັນຫາຕ່າງໆ ເປັນຕົ້ນ: ການຮົ່ວໄຫຼການຈັດເກັບລາຍຮັບ ງົບປະມານ, ການຄຸ້ມຄອງລົດບັນທຸກເກີນຂອບເຂດ ທີ່ເປັນສາເຫດເຮັດໃຫ້ເສັ້ນທາງເປ່ເພ, ການເຊົ່າ ແລະ ສຳປະທານ, ການຂຸດຄົ້ນແຮ່ທາດ ແລະ ອື່ນໆ ເຊິ່ງລ້ວນແລ້ວແຕ່ແມ່ນບັນຫາທີ່ສັງຄົມ ແລະ ປະຊາຊົນ ກຳລັງໃຫ້ຄວາມສົນໃຈຢ່າງສູງ.

ຕໍ່ກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ: ພາຍໃຕ້ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ການຮ່ວມມືຂອງທຸກພາກສ່ວນ, ປະເທດເຮົາຍັງສືບຕໍ່ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ເຊິ່ງການເຕີບໂຕທາງເສດຖະກິດ (GDP) ບັນລຸ 5.1%, ສາມາດຮັກສາສະຖຽນລະພາບດ້ານເງິນຕາ ແລະ ປະຕິບັດໄດ້ບາງຄາດໝາຍດ້ານອັດທະນະທຳ-ສັງຄົມ; ແຕ່ເຖິງຢ່າງໃດກໍຕາມ, ສພຊ ກໍໄດ້ສະເໜີໃຫ້ລັດຖະບານ ເອົາໃຈໃສ່ແກ້ໄຂບັນຫາການຂຶ້ນສິ່ງທີ່ລົດບັນທຸກນ້ຳໜັກເກີນ ເຮັດໃຫ້ເສັ້ນທາງເປ່ເພ, ການຄຸ້ມຄອງການລົງທຶນຂອງລັດ-ເອກະຊົນ, ການເຊົ່າ-ສຳປະທານທີ່ດິນ ແລະ ການຂຸດຄົ້ນແຮ່ທາດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ທ່ວງທັນກັບຄວາມຕ້ອງການຂອງສັງຄົມ.

ຕໍ່ກັບແຜນງົບປະມານແຫ່ງລັດ: ກອງປະຊຸມຕີລາຄາສູງຕໍ່ການຈັດເກັບລາຍຮັບປະຕິບັດໄດ້ເຖິງ 110% ຂອງແຜນການ ເຊິ່ງລື່ນຄາດໝາຍທີ່ວາງໄວ້; ພ້ອມນັ້ນ, ໄດ້ເນັ້ນໃຫ້ລັດຖະບານ ເອົາໃຈໃສ່ເພີ່ມທະວີວິໄນການເງິນ-ງົບປະມານຢ່າງເຂັ້ມງວດ, ສະກັດກັ້ນການຮົ່ວໄຫຼຂອງລາຍຮັບ, ຄຸ້ມຄອງລາຍຈ່າຍງົບປະມານໃຫ້ມີປະສິດທິຜົນສູງ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ-ງົບປະມານໃນໄລຍະຍາວ.

ຕໍ່ກັບທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2027: ກອງປະຊຸມໄດ້ສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມຕື່ມ ຄື:

1. ວິເຄາະ-ວິໄຈຢ່າງລະອຽດຂຶ້ນຕື່ມ.

2. ຂະຫຍາຍການຫັນເປັນລະບົບທັນສະໄໝເຂົ້າໃນການຈັດເກັບລາຍຮັບ ໃຫ້ຫຼາຍຂຶ້ນ ແລະ ທົ່ວເຖິງ ໂດຍສະ ເພາະຢູ່ຫ້ວໜ່ວຍທຸລະກິດ, ສະໜອງງົບປະມານຢ່າງພຽງພໍເພື່ອສຸມໃສ່ການຫັນເປັນທັນສະໄໝ ຄວບຄູ່ກັບການເພີ່ມທະວີຄວາມເຂັ້ມງວດໃນການກວດກາເຈົ້າໜ້າທີ່ ແລະ ໜ່ວຍງານທີ່ມີສິດອະນຸມັດ ທີ່ປະຈຳຢູ່ດ່ານສາກົນ.

3. ປັບປຸງ ແລະ ເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ການຈັດສັນງົບປະມານການລົງທຶນຂອງລັດ ໂດຍສະ ເພາະບັນດາໂຄງການ ໃຫ້ສຳເລັດ 100%.

4. ປະເມີນ ແລະ ທົບທວນຄືນໂຄງການທີ່ໄດ້ຮັບອະນຸມັດ ແຕ່ການຈັດຕັ້ງປະຕິບັດຊັກຊ້າ ຫຼື ບໍ່ມີຄວາມຄືບໜ້າ (ໂດຍສະເພາະໂຄງການລະດັບຊາດ) ເພື່ອແກ້ໄຂບັນຫາ ການເອົາໂຄງການໄປຂາຍ/ໂອນຕໍ່ໂດຍບໍ່ຜ່ານລັດຖະບານ ທັງກວດ ກາຄືນການດັດແກ້ມູນຄ່າໂຄງການທີ່ຫົວໜ່ວຍລາຄາສູງເກີນ.

5. ການດຶງດູດການລົງທຶນ, ການສ້າງສູນບໍລິການປະຕູດຽວ ເຫັນວ່າ ຫຼາຍບ່ອນເຄື່ອນໄຫວບໍ່ມີປະສິດທິຜົນ ຍ້ອນງົບປະມານຍັງມີຈຳກັດ, ຫຼາຍຂະແໜງການບໍ່ໄດ້ສົ່ງພະນັກງານລົງປະຈຳເພື່ອອຳນວຍຄວາມສະດວກໃຫ້ນັກລົງທຶນ, ນະໂຍບາຍ ແລະ ການກຳນົດເຂດລົງທຶນຍັງບໍ່ມີຄວາມຊັດເຈນ, ການກຳນົດຂັ້ນຄຸ້ມຄອງຕ້ອງມີຄວາມຊັດເຈນຕື່ມ.

6. ຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າ, ຫຼຸດຜ່ອນການນຳເຂົ້າ ແລະ ຜະລິດເປັນສິນຄ້າສົ່ງອອກໃຫ້ຫຼາຍຂຶ້ນ ທັງໃຫ້ຕິດພັນກັບຕ່ອງໂສ້ການຜະລິດ, ປັບປຸງພື້ນຖານໂຄງລ່າງໃຫ້ເຊື່ອມຈອດກັນ ເພື່ອຊຸກຍູ້ການຄ້າຂາຍຜົນຜະລິດກະສິກຳຂອງປະຊາຊົນ ແລະ ຮັບປະກັນການເຂົ້າເຖິງຕະຫຼາດໃຫ້ທ່ວງທັນຕາມອາຍຸຂອງຜະລິດຕະຜົນ; ນອກນັ້ນ, ໃຫ້ຊຸກ ຍູ້ດ້ານປັດໄຈການຜະລິດ ເພື່ອຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ.

7. ກວດກາຄືນໂຄງການເຊົ່າ-ສຳປະທານທີ່ດິນທີ່ໄດ້ຮັບອະນຸມັດຈາກສູນກາງ ແລະ ທ້ອງຖິ່ນ ທີ່ບໍ່ມີການພັດທະນາ, ນຳໃຊ້ບໍ່ຖືກເປົ້າໝາຍ, ອະນຸມັດທັບຊ້ອນ, ໂຄງການທີ່ສົ່ງຜົນກະທົບຕໍ່ທີ່ດິນ ແລະ ຊັບສິນຂອງປະຊາຊົນ.

8. ຈັດສັນງົບປະມານເຂົ້າໃນການຈັດຕັ້ງປະຕິບັດວຽກງານການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ທັງມີມາດຕະການເດັດຂາດຕໍ່ຜູ້ບຸກລຸກ, ຈັບຈອງ ແລະ ນຳໃຊ້ທີ່ດິນປ່າໄມ້ໂດຍບໍ່ໄດ້ຮັບອະນຸຍາດ.

9. ປະເມີນຄືນການຈັດຕັ້ງປະຕິບັດຍຸດທະສາດແຮ່ທາດຮອດປີ 2030 ໂດຍສະເພາະການກຳນົດປະເພດແຮ່ທາດທີ່ຄວນສົ່ງເສີມໃຫ້ມີການຂຸດຄົ້ນ, ແຮ່ທາດທີ່ຄວນຫວງຫ້າມ ຫຼື ສະຫງວນ.

10. ເພີ່ມມາດຕະການຄຸ້ມຄອງລົດບັນທຸກນ້ຳໜັກເກີນ, ການດັດແປງເຕັກນິກລົດເພື່ອບັນທຸກໃຫ້ໄດ້ຫຼາຍ ແລະ ຊົ່ງຊັ່ງນ້ຳໜັກ; ສຸມໃສ່ການກໍ່ສ້າງ ແລະ ບູລະນະສ້ອມແປງພື້ນຖານໂຄງລ່າງ ໂດຍສະເພາະເສັ້ນທາງຍຸດທະສາດ, ທາງຫຼວງແຫ່ງຊາດ, ເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວທີ່ເປ່ເພຢ່າງໜັກໜ່ວງ ແລະ ເສັ້ນທາງທີ່ມີຄວາມສຳຄັນ ແລະ ຈຳເປັນຕາມຊາຍແດນທີ່ມີການຂົນສົ່ງສິນຄ້າເຂົ້າ-ອອກຜ່ານດ່ານສາກົນຕ່າງໆ.

11. ຄົ້ນຄວ້າສ້າງໂຮງຮຽນກິນນອນ, ຫໍພັກນັກຮຽນ ເພື່ອແກ້ໄຂບັນຫາການປະລະການຮຽນຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ປະຕິບັດນະໂຍບາຍໃຫ້ຄູສອນຢູ່ເຂດພູດອຍ ທັງປັບປຸງຫຼັກສູດການຮຽນ-ການສອນໃຫ້ແທດເໝາະກັບທ້ອງຖິ່ນ.

12. ສຸມໃສ່ຈັດສັນງົບປະມານໃຫ້ຂະແໜງສຶກສາ 18% ຕາມກົດໝາຍ ກຳນົດ ໂດຍສະເພາະຮ່ວງສິ່ງເສີມວິຊາການໃຫ້ຫຼາຍຂຶ້ນ ເພື່ອໃຫ້ເດັກໃນໄວຮຽນໄດ້ຮັບການສຶກສາ ແລະ ການສຶກສາສາຍວິຊາຊີບໂດຍບໍ່ເສຍຄ່າ ເພື່ອຫຼຸດຜ່ອນການປະລະການຮຽນ;ເພີ່ມອັດຕາເບ້ຍລ້ຽງໃຫ້ແກ່ນັກຮຽນຊົນເຜົ່າ ເພື່ອສົ່ງເສີມການເຂົ້າເຖິງການສຶກສາ,ຮັບປະກັນງົບປະມານໃຫ້ໂຄງການທີ່ໄດ້ຮັບການອະນຸມັດ ສາມາດຈັດຕັ້ງປະຕິບັດໄດ້.

13. ຈັດສັນງົບປະມານໃຫ້ຂະແໜງສາທາລະນະສຸກ 9% ຕາມທີ່ກົດໝາຍກຳນົດ; ເອົາໃຈໃສ່ຕໍ່ວຽກງານແມ່-ເດັກ ແລະ ໂພຊະນາການ ທີ່ຕິດພັນກັບ 7 ຄາດໝາຍໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ເປັນຄາດໝາຍທີ່ມີຄວາມສ່ຽງຈະບໍ່ບັນລຸ.

14. ຈັດສັນງົບປະມານສະເພາະໃຫ້ວຽກງານເກັບກູ້ລະເບີດບໍ່ທັນແຕກ ທັງເປັນເຈົ້າການລະດົມທຶນຊ່ວຍເຫຼືອຈາກຫຼາຍພາກສ່ວນ ດ້ວຍຫຼາຍຮູບການທີ່ເໝາະສົມ.

15. ເພີ່ມທະວີການໂຄສະນາເຜີຍແຜ່ຢ່າງກວ້າງຂວາງ ລວມທັງການປະເມີນຜົນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການນຳໃຊ້ເຄມີທີ່ຖືກຄວບຄຸມການນຳໃຊ້ ໂດຍສະເພາະການນຳໃຊ້ເຄມີຢູ່ໂຮງງານຜະລິດຢາ, ການປຸງແຕ່ງຕ່າງໆ ເພື່ອເຮັດໃຫ້ການນຳໃຊ້, ການຜະລິດຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

ກົດໝາຍການປົກ...

(ຕໍ່ຈາກໜ້າ 1)

ກົດໝາຍ, ໂຄງປະກອບ ແລະ ເນື້ອໃນສຳຄັນ, ແລະ ຄາດຄະເນຜົນໄດ້ຮັບ ເຊິ່ງຮ່າງກົດໝາຍສະບັບນີ້ ໄດ້ຜັນຂະຫຍາຍມາຈາກດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017 ເຊິ່ງຜ່ານການຈັດຕັ້ງປະຕິບັດ 9 ປີ ເຫັນວ່າຍັງມີບາງດ້ານທີ່ເປັນຂໍ້ຈຳກັດ ແລະ ສ້າງຄວາມຫຍຸ້ງຍາກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ.

ພາຍຫຼັງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ ຈະມີຜົນໄດ້ຮັບ: ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຝາກເງິນ ເພື່ອລະດົມເງິນຝາກເຂົ້າໃນລະບົບສະຖາບັນການເງິນໃຫ້ຫຼາຍຍິ່ງຂຶ້ນ ແນໃສ່ບັນລຸຄາດໝາຍຍອດເງິນຝາກຕໍ່ GDP ຫຼາຍກວ່າ 90% ທັງເປັນການເສີມສ້າງຄວາມເຂັ້ມແຂງຂອງລະບົບຕາໜ່າງຄວາມປອດໄພທາງດ້ານການເງິນ ແລະ ຮັກສາສະຖຽນລະພາບທາງດ້ານການເງິນຂອງ ສປປລາວ ແລະ ການເຂົ້າເຖິງການບໍລິການທາງການເງິນຂອງ ສປປລາວ; ເປັນບ່ອນອີງໃນການຜັນຂະຫຍາຍນິຕິກຳໃຕ້ກົດໝາຍ ເພື່ອຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ ເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ ເພື່ອປັບປຸງແລະຜັດທະນາການຄຸ້ມຄອງຂອງສຳນັກງານປົກປ້ອງເງິນຝາກ (ສປງ) ກໍຄື ທຫລ ມີຄວາມເຂັ້ມແຂງ; ໄດ້ກຳນົດເພີ່ມສະມາຊິກຂອງ ສປງ ເຊິ່ງລວມມີທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ທີ່ຮັບເງິນຝາກ ແລະ ສະຖາບັນການເງິນອື່ນທີ່ຮັບເງິນຝາກ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ຈະສາມາດຂະຫຍາຍສະມາຊິກຂອງ ສປງ ໃຫ້ຫຼາຍຍິ່ງຂຶ້ນໃນຂອບເຂດທົ່ວປະເທດ ຕາມພາລະບົດບາດຂອງ ທຫລ ເພື່ອຮັບປະກັນການປົກປ້ອງເງິນຝາກຂອງຜູ້ຝາກເງິນ ໃຫ້ກວມເອົາອັດຕາສ່ວນເພີ່ມຂຶ້ນ ທັງສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ ໃນການນຳເງິນໄປຝາກໄວ້ກັບສະມາຊິກຂອງ ສປງ ນັບມື້ນັບສູງຂຶ້ນ.



#ບ່າວກະບີ

ຜູ້ບ່າວ: “ທີ່ຮັກ, ຖ້ານ້ອງເອົາກັບອ້າຍ ອ້າຍຊິມອບທຸກສິ່ງທຸກຢ່າງໃຫ້ນ້ອງ ຍົກເວັ້ນເດືອນກັບດາວ”

ຜູ້ສາວ: “ຖ້າຮັກນ້ອງແທ້, ເຫດໃດນໍ້ຍົກເວັ້ນ?”

#BAOKBU

BOY: “Darling, if you marry me, I will offer you every thing except the moon and stars ”

GIRL: “If you really love me, why exceptions?”

ຜູ້ຊີ້ນຳ

ທ່ານ ເອັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

ຄະນະບັນນາທິການ

ທ່ານ ບໍ ຫານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

ກອງບັນນາທິການ

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

ອອກແບບ - ຈັດໜ້າ

ທ່ານ ນາງ ນິດຕາ ຄຸນປາກດີ

ຮູບພາບປະກອບ

ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ